# ປະກາດແຈ້ງການ

**(ແຈ້ງການລ່ວງໜ້າກ່ຽວກັບທຶນເງິນກູ້ຈາກກອງທຶນ LAFF)**

ທະນາຄານ ແຫ່ງ ສປປ ລາວ (ທຫລ) ມີຄວາມຍິນດີແຈ້ງມາຍັງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ (ສກຈຮ) ກ່ຽວກັບ ການສົ່ງໜັງສືສະແດງເຈດຈໍານົງ (EOI) ໃນການສະເໜີຂໍກູ້ຢືມທຶນຈາກ “ກອງທຶນສົ່ງເສີມການເຂົ້າເຖິງແຫຼ່ງທຶນ ໃນ ສປປ ລາວ” (LAFF) ເຊິ່ງເປັນກອງທຶນທີ່ໄດ້ຮັບທຶນສະໜັບສະໜູນຈາກລັດຖະບານຂອງປະເທດເຢຍລະມັນ ໂດຍຜ່ານທະນາຄານເພື່ອການພັດທະນາຂອງປະເທດເຢຍລະມັນ KfW, ເຊິ່ງຈະໄດ້ມີການອອກປະກາດແຈ້ງການຢ່າງເປັນທາງການ ໃນມື້ວັນທີ **29 ເດືອນພະຈິກ ປີ 2021.**

ກອງທຶນສົ່ງເສີມການເຂົ້າເຖິງແຫຼ່ງທຶນ ໃນ ສປປ ລາວ (ຫຼື LAFF) ແມ່ນສ້າງຕັ້ງຂຶ້ນໃນປີ 2014, ຊຶ່ງໄດ້ຮັບທຶນສະໜັບສະໜູນຈາກ ກະຊວງເພື່ອການຮ່ວມມື ແລະ ການພັດທະນາດ້ານເສດຖະກິດ (BMZ) ຂອງປະເທດເຢຍລະມັນ ໂດຍຜ່ານ ທະນາຄານພັດທະນາຂອງ ປະເທດເຢຍລະມັນ ຫຼື KfW. ເປົ້າໝາຍຂອງກອງທຶນດັ່ງກ່າວແມ່ນເພື່ອແນ່ໃສ່ການສົ່ງເສີມການເຂົ້າເຖິງແຫຼ່ງທຶນສໍາລັບ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ໃນເຂດຊົນນະບົດ ຂອງ ສປປ ລາວ, ຊຶ່ງທຶນເບື້ອງຕົ້ນແມ່ນ 3 ລ້ານຢູໂຣ. ຜ່ານມາ ກອງທຶນ LAFF ໄດ້ໃຫ້ການປ່ອຍກູ້ໃຫ້ແກ່ ທະນາຄານທຸລະກິດ ແລະ ສກຈຮ ເພື່ອນໍາໄປປ່ອຍກູ້ຕໍ່ໃຫ້ແກ່ MSMEs ຫຼາຍກ່ວາ 2,500 ຫົວໜ່ວຍໃນຂອບເຂດທົ່ວປະເທດ, ໃນນັ້ນ ມີຫຼາຍຫົວໜ່ວຍ MSMEs ແມ່ນຖືວ່າເປັນການເຂົ້າເຖິງແຫຼ່ງທຶນຄັ້ງທໍາອິດ ຂອງເຂົາເຈົ້າຈາກກອງທຶນດັ່ງກ່າວ.

ຈາກຜົນສໍາເລັດຂອງໂຄງການ LAFF ໄລຍະ I, ລັດຖະບານຂອງປະເທດເຢຍລະມັນ ຈຶ່ງສືບຕໍ່ໃຫ້ທຶນ ສະໜັບສະໜູນເພີ່ມຕື່ມອີກ 6 ລ້ານຢູໂຣ ແລະ ອີກ 0.8 ລ້ານຢູໂຣເປັນທຶນຊ່ວຍເຫຼືອດ້ານ ວິຊາການໃຫ້ແກ່ ໂຄງການ LAFF ໄລຍະ II, ຊຶ່ງໄດ້ເລີ່ມມາແຕ່ວັນທີ 02 ມີນາ 2020.

ລາຍລະອຽດເພີ່ມຕື່ມ ກ່ຽວກັບ ການສະເໜີເຈດຈໍານົງ (EOI) ແມ່ນປະກາດຢູ່ເວບໄຊຂອງ ທຫລ (www.bol.gov.la) ແລະ ເວບໄຊ ຂອງໂຄງການກອງທຶນ LAFF (www.laff.org) ໃນມື້ວັນທີ **29 ເດືອນພະຈິກ ປີ 2021**, ຊຶ່ງເນື້ອໃນລາຍລະອຽດຈະມີ: ເງື່ອນໄຂໃນການກູ້ຢືມ, ເງື່ອນໄຂຂອງສະຖາບັນການເງິນທີ່ຈະສາມາດກູ້ຢືມໄດ້, ແບບຟອມໃບສະເໜີຂໍເງິນກູ້ ແລະ ເອກະສານຕ່າງໆທີ່ຈະໄດ້ປະກອບໃສ່ ເພື່ອສະໜັບສະໜູນໃຫ້ແກ່ໃບສະເໜີຂໍເງິນກູ້. ທາງໂຄງການຈະໄດ້ປະຊຸມແບບທາງໄກ ຫຼື ທາງອອນລາຍ ເພື່ອອະທິບາຍກ່ຽວກັບ ເງື່ອນໄຂການສະເໜີຂໍທຶນ ໃນວັນທີ **09 ເດືອນທັນວາ ປີ 2021 ໃນເວລາ 9 ໂມງ ຕອນເຊົ້າ.**

ແລະ ຈະເປີດໃຫ້ສອບຖາມຜ່ານທາງ ອອນໄລ (online), ຜູ້ທີ່ສົນໃຈສະເໜີຂໍທຶນສາມາດສົ່ງຄຳຖາມ ຫຼື ຂໍ້ຂ້ອງໃຈ ເພື່ອໃຫ້ໂຄງການ ອະທິບາຍເພີ່ມຕື່ມ ໄປໃຫ້ໂຄງການ ກ່ອນວັນທີ **15 ທັນວາ ປີ 2021**, ທາງໂຄງການຈະໃຫ້ການອະທິບາຍ ແລະ ຕອບຂໍ້ຂ້ອງໃຈຕ່າງໆ ພາຍໃນ 1 ອາທິດພາຍຫຼັງໄດ້ຮັບຄຳຖາມ ຫຼື ຂໍ້ຂ້ອງໃຈຕ່າງໆ.

ວັນກຳນົດສົ່ງໜັງສືສະແດງເຈດຈຳນົງ ສຳລັບ ທະນາຄານທຸລະກິດ ແລະ ສກຈຮ ແມ່ນ ວັນທີ **21 ເດືອນມັງກອນ ປີ 2022.** ຫຼັງຈາກນັ້ນ ໂຄງການ LAFF ຈະທົບທວນໃບສະເໜີຂໍທຶນ ແລະ ລົງໄປປະເມີນຄວາມພ້ອມ (Due diligence) ເພື່ອທຳການປະເມີນຄວາມສາມາດໃນການກູ້ຢືມຂອງແຕ່ລະສະຖາບັນການເງິນທີ່ສະເໜີຂໍທຶນ. ຈາກນັ້ນ ທາງໂຄງການ ຈະຕົກລົງອະນຸມັດການປ່ອຍທຶນເງິນກູ້ພາຍໃນ **ທ້າຍເດືອນ ກຸມພາ 2022** ແລະ ຈະເລີ່ມເບີກຈ່າຍທຶນເງິນກູ້ໃນ **ເດືອນ ມີນາ 2022.**

ການສະໜັບສະໜູນຜູ້ປະກອບການ MSME ແມ່ນນະໂຍບາຍບູລິມະສິດຂອງລັດຖະບານ ແຫ່ງ ສປປ ລາວ, ເນື່ອງຈາກ MSME ໄດ້ປະກອບສ່ວນອັນສຳຄັນໃນການສ້າງວຽກເຮັດງານທຳ ແລະ ສ້າງ ລາຍຮັບໃຫ້ແກ່ປະຊາຊົນລາວ. ການຍົກລະດັບການບໍລິການໃນການເຂົ້າເຖິງແຫຼ່ງທຶນໄລຍະຍາວ ທີ່ເປັນສະກຸນເງິນກີບ ໃຫ້ແກ່ MSME ຈະເຮັດໃຫ້ເຂົາເຈົ້າສາມາດນຳໄປລົງທຶນເພື່ອຂະຫຍາຍກິດຈະການຂອງຕົນ ແລະ ປະກອບສ່ວນໃຫ້ແກ່ການຂະຫຍາຍຕົວທາງເສດຖະກິດຢ່າງມີຄວາມສະເໝີພາບໃນ ສປປ ລາວ.

**<u>ລາຍລະອຽດເພີ່ມຕື່ມ ກະລຸນາຕິດຕໍ່:</u>**

ທ່ານ ນ. ສ້ອຍສຸວັນ ສີບໍລິບູນ, ຜູ້ຈັດການກອງທຶນ LAFF, ພະແນກສິນເຊື່ອ, ກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ, ໂທ: 021 262672, 020 22440559

ຫຼື

ທ່ານ ແກ້ວລັບທະວົງ ສິງສະໄໝວົງ, ທີ່ປຶກສາກອງທຶນ LAFF, ໂທ: 020 99389966